**TOYOTA TSUSHO CORPORATION**
Compliance & Crisis Management Dept.
Compliance Management Group

| | |
|---|---|
| First Edition | July 1st , 2016 |
| Second Edition | July 2nd , 2018 |
| Third Edition | October 1st , 2025 |

TOYOTA TSUSHO GROUP

TOYOTA TSUSHO GROUP

COCE, for the Future

# ລະຫັດສາກົນຂອງການປະຕິບັດແລະຈັນຍາບັນ

# COCE

Global Code of Conduct and Ethics

# ຂໍ້ຄວາມຈາກປະທານ ແລະ CEO

ສະບາຍດີທຸກທ່ານ,

ພວກເຮົາ,ກຸ່ມ Toyota Tsusho, ສົ່ງເສີມປັດຊະຍາຂອງບໍລິສັດຄື "ດຳລົງຊີວິດ ແລະ ຈະເລີນກ້າວໜ້າຮ່ວມກັນກັບປະຊາຊົນ, ສັງຄົມ ແລະ ໂລກ, ພວກເຮົາມຸ່ງໝັ້ນທີ່ຈະເປັນບໍລິສັດທີ່ສ້າງຄຸນຄ່າເຊິ່ງປະກອບສ່ວນໃນການສ້າງສັງຄົມທີ່ມີຄວາມຈະເລີນຮຸ່ງເຮືອງ."

ກຸ່ມ Toyota Tsusho ແມ່ນອົງກອນທີ່ເປັນເອກະລັກເດັ່ນ ທີ່ປະກອບດ້ວຍພະນັກງານ 70,000 ຄົນ ຈາກປະຫວັດຄວາມເປັນມາຫຼາກຫຼາຍ, ສັນຊາດ, ອາຍຸ ແລະ ເພດທີ່ມີຄວາມແຕກຕ່າງ, ດຳເນີນງານໃນຫຼາຍກວ່າ 130 ປະເທດທົ່ວໂລກ. ເຖິງວ່າພວກເຮົາມີຄວາມຫຼາກຫຼາຍ, ແຕ່ປັດຊະຍາຂອງບໍລິສັດຮວບຮວມພວກເຮົາທັງໝົດໃຫ້ເປັນອັນດຽວກັນ. ແນວທາງປະຕິບັດ ແມ່ນຫຼັກການຂອງປະຕິບັດ ທີ່ໄດ້ຖືກກຳນົດ ເພື່ອໃຫ້ປັດຊະຍາຂອງບໍລິສັດກາຍເປັນຈິງ, ແລະ ລະຫັດສາກົນຂອງການປະຕິບັດແລະຈັນຍາບັນ (COCE) ໄດ້ສະໜອງໂຄງສ້າງຂອງແນວທາງທີ່ມີຄວາມລະອຽດ ແລະ ມີຄວາມຊັດເຈນຫຼາຍຂຶ້ນສຳລັບການນຳໃຊ້ແນວທາງປະຕິບັດເຫຼົ່ານີ້.

ເພື່ອສືບຕໍ່ການເຕີບໂຕຢ່າງຕໍ່ເນື່ອງເປັນບໍລິສັດ  ພວກເຮົາມີຄວາມຈຳເປັນຕ້ອງເຮັດໃຫ້ ຈິດໃຈ "Be the Right ONE" ເປັນຈິງ ດ້ວຍການສ້າງຄວາມໄວ້ວາງໃຈ ແລະ ຮັບເລືອກຈາກສັງຄົມ ແລະ ລູກຄ້າຂອງພວກເຮົາຢ່າງຕໍ່ເນື່ອງ. ຄວາມໄວ້ວາງໃຈບໍ່ແມ່ນສິ່ງທີ່ສາມາດສ້າງໄດ້ມາໃນຄ່ຳຄືນດຽວ. ມັນຕ້ອງໃຊ້ເວລາຄ່ອຍໆຖືກສ້າງຂຶ້ນເທື່ອລະໜ້ອຍໂດຍການປະຕິບັດທີ່ສະໝ່ຳສະເໝີ ແລະ ຈິງໃຈພ້ອມກັບການຕັດສິນໃຈ ຢ່າງຮອບຄອບຂອງແຕ່ລະຄົນໃນແຕ່ລະມື້. COCE ປຽບເໝືອນກັບ "ເຂັມທິດ" ເຊິ່ງນຳພາພວກເຮົາໃຫ້ປະຕິບັດດ້ວຍຄວາມຊື່ສັດແລະ ໃຫ້ເດີນໄປຕາມເສັ້ນທາງທີ່ຖືກຕ້ອງ.

ໃນຂະນະທີ່ທຸລະກິດຂອງພວກເຮົາຂະຫຍາຍຕົວໄປທົ່ວໂລກໃນຫຼາກຫຼາຍຂະແໜງ,ຈະໄດ້ເຫັນວ່າພວກເຮົາກຳລັງດຳເນີນທຸລະກິດໃນໂລກທີ່ມີຄວາມຊັບຊ້ອນຫຼາຍຂຶ້ນ ທີ່ບໍ່ຄ່ອຍມີຄຳຕອບ"ຖືກຕ້ອງ"ອັນດຽວ. ເຖິງແມ່ນວ່າພວກເຮົາຕົກຢູ່ໃນເວລາແບບນີ້ກໍຕາມ,ຢ້ານໃນການປ່ຽນແປງບໍ່ໄດ້ເດັດຂາດ,ຕ້ອງມີກ້າຫານການປ່ຽນແປງ; ເຖິງແນວໃດກໍຕາມ,ພວກເຮົາຕ້ອງຍອມຮັບ ແລະ ຕ້ອງມີກ້າຫານທີ່ຈະປະເຊີນໜ້າກັບຄວາມທ້າທາຍອັນໃໝ່.ເພື່ອໃຫ້ບັນລຸຕາມເປົ້າໝາຍດັ່ງກ່າວ, ສິ່ງສຳຄັນໄປກວ່າທີ່ຜ່ານມາຄື ພວກເຮົາຕ້ອງໄດ້ຮັກສາຄຸນຄ່າຫຼັກພວກເຮົາທີ່ມີຄວາມເຂັ້ມແຂງແລະຄວາມໝັ້ນຄົງ.

ໃນຖານະທີ່ເປັນສະມາຊິກຂອງກຸ່ມToyota Tsusho, ຂ້າພະເຈົ້າຂໍໃຫ້ທຸກທ່ານເຂົ້າໃຈ COCE ຢ່າງເລິກເຊິ່ງ ແລະ ນຳໃຊ້ນີ້ເປັນພື້ນຖານສຳລັບການປະຕິບັດແລະການຕັດສິນໃຈໃນວຽກປະຈຳວັນ. ຢາກໃຫ້ຖາມຕົນເອງ ສະເໝີວ່າ:"ຂ້ອຍສາມາດແບ່ງປັນວຽກທີ່ຂ້ອຍເຮັດ ແລະ ທຸລະກິດທີ່ຂ້ອຍມີສ່ວນຮ່ວມໃຫ້ຄອບຄົວແລະໝູ່ເພື່ອນເຮັດໄດ້ຢ່າງພາກພູມໃຈບໍ?"

ພວກເຮົາແມ່ນທີມທີ່ສ້າງອະນາຄົດຂອງກຸ່ມ Toyota Tsusho. ພວກເຮົາສືບຕໍ່ເດີນໄປທາງໜ້າ ໂດຍມີ COCE ເປັນເຂັມທິດນຳທາງນຳກັນເທາະ ເພື່ອສົ່ງຕໍ່ໂລກທີ່ດີກວ່າປັດຈຸບັນໃຫ້ແກ່ພວກເດັກນ້ອຍໃນອະນາຄົດ.



**ທ່ານ ອິໄມ ໂທຊິມິທສຶ**
ປະທານ & CEO
ບໍລິສັດ Toyota Tsusho



# ກ່ຽວກັບຄູ່ມືນີ້

ເມື່ອຕັດສິນໃຈ ຫຼື ປະເຊີນໜ້າກັບເລື່ອງທີ່ມີຄວາມບໍ່ແນ່ນອນ, ຄູ່ມືຫົວນີ້ຈະໃຫ້ຄຳອະທິບາຍທີ່ເຂົ້າໃຈງ່າຍກ່ຽວກັບ ລະຫັດສາກົນຂອງການປະຕິບັດແລະຈັນຍາບັນ,ເຊິ່ງອະທິບາຍເລື່ອງຄຸນຄ່າແລະມາດຕະຖານໃນການຕັດສິນໃຈສຳລັບສະມາຊິກທຸກຄົນໃນກຸ່ມ Toyota Tsusho. ກະລຸນາເກັບນີ້ໄວ້ໃກ້ມືເພື່ອໃຫ້ທ່ານສາມາດອ້າງອີງເຖິງມັນໄດ້ທຸກໆເວລາ.





- ລະຫັດສາກົນຂອງການປະຕິບັດແລະຈັນຍາບັນແມ່ນຫຍັງ? ...... 04
- MVV ແລະ COCE ...... 06
- ຫຼັກຄວາມເຊື່ອຖື 10 ຂໍ້ ຂອງ COCE ...... 08
- ແຜນວາດການຍືນຢັນ COCE ...... 16
- ການລາຍງານການລະເມີດຕ່າງໆຂອງ COCE ...... 18

# ລະຫັດສາກົນຂອງການປະຕິບັດແລະ ຈັນຍາບັນ(COCE)ແມ່ນຫຍັງ?

COCE, for the Future

ລະຫັດສາກົນຂອງການປະຕິບັດແລະຈັນຍາບັນແມ່ນຫຍັງ? (COCE) ແມ່ນຊຸດມາດຕະຖານ ແລະຫຼັກການດ້ານຈັນຍາບັນທີ່ນຳໃຊ້ໄດ້ລະດັບສາກົນ ເປັນຄູ່ມືທີ່ເຮັດໃຫ້ ແນວທາງປະຕິບັດຢ່າງຈະແຈ້ງ ແລະ ໂດຍສະເພາະ ເພື່ອສະໜັບສະໜູນປັດສະຍາຂອງກຸ່ມບໍລິສັດ Toyota Tsusho Group.

ສະມາຊິກແຕ່ລະຄົນຂອງກຸ່ມ Toyota Tsusho ຕ້ອງຮັກສາ COCE ຢ່າງດີ ເປັນມາດຕະຖານຂອງຄ່ານິຍົມແລະການຕັດສິນໃຈ ໃນຂະນະປະຕິບັດວຽກງານປະຈຳວັນ, ພວກເຮົາຕ້ອງພະຍາຍາມປະຕິບັດເຄົາລົບປັດຊະຍາຂອງບໍລິສັດພວກເຮົາເພື່ອເດີນໄປທາງໜ້າ.

## ຫຼັກການພື້ນຖານຂອງກຸ່ມ Toyota Tsusho

### ປັດຊະຍາຂອງບໍລິສັດ

ການດໍາລົງ ແລະ ຈະເລີນກ້າວໜ້າໄປພ້ອມກັນກັບປະຊາຊົນ, ສັງຄົມ ແລະ ໂລກ,ພວກເຮົາມຸ່ງໜ້າໄປສູ່ເປັນບໍລິສັດທີ່ສ້າງຄຸນຄ່າເຊິ່ງປະກອບສ່ວນໃນການສ້າງສັງຄົມທີ່ມີຄວາມຈະເລີນແລະກ້າວໜ້າ.

### ແນວທາງປະຕິບັດ

ໃນຖານະທີ່ເປັນພົນລະເມືອງທີ່ດີຂອງພະນັກງານບໍລິສັດ,

- ພວກເຮົາຈະພະຍາຍາມດຳເນີນກິດຈະກຳຂອງບໍລິສັດແບບເປີດເຜີຍ ແລະ ເປັນທຳ;
- ພວກເຮົາຈະພະຍາຍາມຮັບຜິດຊອບຕໍ່ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດ;
- ພວກເຮົາຈະພະຍາຍາມມີຫົວຄິດສ້າງສັນ ແລະ ພະຍາຍາມສ້າງມູນຄ່າເພີ່ມ; ແລະ
- ພວກເຮົາຈະເຄົາລົບນັບຖືຜູ້ອື່ນ ແລະ ສ້າງສະຖານທີ່ເຮັດວຽກແບບມີສະເໜ່.



**COCE ປະກອບດ້ວຍຫຼັກການຕ່າງດັ່ງຕໍ່ໄປນີ້**

- ມີຄວາມປອດໄພແລະການປະຕິບັດຕາມກົດໝາຍແມ່ນປະຕູເຂົ້າສູ່ວຽກງານທັງໝົດ
- ເປີດເຜີຍຂໍ້ມູນການເງິນຢ່າງຖືກຕ້ອງໃນຖານະທີ່ເປັນບໍລິສັດທີ່ຖືກຈົດທະບຽນຂອງຕະຫຼາດຫຼັກຊັບ
- ປະຕິບັດຕາມບໍ່ພຽງແຕ່ກົດໝາຍຢ່າງດຽວເທົ່ານັ້ນ ແຕ່ຍັງລວມເຖິງກົດລະບຽບພາຍໃນແລະຈັນຍາບັນຂອງບໍລິສັດ
- ເພື່ອການພັດທະນາແບບຍືນຍົງຂອງສັງຄົມ, ສ້າງຄຸນຄ່າເພີ່ມໂດຍຜ່ານຄວາມຄິດສ້າງສັນແລະການປັບປຸງ ໂດຍຄຳນຶງເຖິງສິ່ງແວດລ້ອມ.
- ເຄົາລົບສິດທິມະນຸດແລະຍອມຮັບຄວາມຫຼາກຫຼາຍ






# MVV ແລະ COCE

COCE, for the Future



COCE ເປັນເໝືອນເຂັມທິດໃນການເຮັດໃຫ້ ພາລະກິດ, ວິໄສທັດ, ແລະຄຸນຄ່າເປັນຈິງ(MVV).

**Mission**
Passing on a better Earth to the children of the future

**Vision**
Ideal Image
Be the Right ONE
An irreplaceable, one-and-only group

**Values**
Core Values and Behavioral Guidelines
Toyota Tsusho DNA
Humanity
Gembality*
Beyond

* Gembality: Combination of “Gemba” [Gemba = “Genchi” (on-site) + “Genbutsu” (hands-on)] + “reality










# ລະຫັດສາກົນຂອງ ການປະຕິບັດລະຈັນຍາບັນ










# ລະຫັດສາກົນຂອງການປະຕິບັດແລະຈັນຍາບັນ

**ຫຼັກການ ຄວາມເຊື່ອຖື 10 ຂໍ້**

1 ພວກເຮົາປະຕິບັດວຽກເລື່ອງ “ANZEN” ເພື່ອສ້າງສະພາບແວດລ້ອມຂອງການເຮັດວຽກທີ່ມີຄວາມປອດໄພ ແລະ ດີຕໍ່ສຸຂະພາບ.

2 ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທັງໝົດ; ລວມທັງກົດໝາຍວ່າດ້ວຍການຕໍ່ຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການຕໍ່ຕ້ານການຜູກຂາດ ແລະ ການແຂ່ງຂັນທາງທຸລະກິດ ແລະ ກົດໝາຍ ແລະ ລະບຽບການຕ່າງໆດ້ານການຄ້າ.

3 ພວກເຮົາປະຕິບັດການລາຍງານທາງດ້ານການເງິນຖືກຕ້ອງ.

4 ພວກເຮົາມີຄວາມຮັບຜິດຊອບຕໍ່ການປະຕິບັດຕາມກົດລະບຽບທຸກຂໍ້ຂອງບໍລິສັດ.

5 ພວກເຮົາຈະປະຕິບັດດ້ວຍຄວາມຊື່ສັດ,ຄວາມສຸດຈະລິດ ແລະ ຄວາມໂປ່ງໃສ, ແລະ ປົກປ້ອງ ແລະ ສົ່ງເສີມ ສ້າງຄວາມໄວ້ວາງໃຈໃນບັນດາຜູ້ມີສ່ວນຮ່ວມທັງໝົດ.

6 ພວກເຮົາຈະປະກອບສ່ວນໃນການພັດທະນາສັງຄົມແບບຍືນຍົງ.

7 ບໍລິສັດພວກເຮົາຈະສົ່ງເສີມ ແລະ ດຳເນີນກິດຈະກຳຕ່າງໆແບບເປັນມິດ ກັບສິ່ງແວດລ້ອມ.

8 ພວກເຮົາຈະເພີ່ມມູນຄ່າໂດຍຜ່ານນະວັດຕະກຳແລະ “Kaizen” (ໂດຍມີການປັບປຸງຢ່າງຕໍ່ເນື່ອງ).

9 ພວກເຮົາຈະເຄົາລົບສິດທິມະນຸດ.

10 ພວກເຮົາຈະຮັບເອົາຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງໝົດທຸກຄົນຢູ່ພາຍໃນບໍລິສັດ ແລະ ໃນສັງຄົມຂອງພວກເຮົາ.



## 1 ພວກເຮົາໄດ້ຮັບຄວາມໄວ້ວາງໃຈໃຫ້ດູແລ “ANZEN” ເພື່ອສ້າງສະພາບແວດ ລ້ອມການເຮັດວຽກທີ່ມີຄວາມປອດໄພ ແລະ ດີຕໍ່ສຸຂະພາບ.

**ຄວາມປອດໄພ ແລະ ສຸຂະພາບຂອງສະມາຊິກພວກເຮົາໝົດທຸກຄົນແມ່ນພື້ນຖານຂອງກິດຈະກຳຕ່າງໆຂອງບໍລິສັດພວກເຮົາ.**

ເພາະສະນັ້ນ,

- ພວກເຮົາຕ້ອງມີມາດຕະການທີ່ເໝາະສົມເພື່ອຮັກສາຄວາມປອດໄພ ແລະ ສຸຂະພາບເຊິ່ງກັນ ແລະ ກັນ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບຈາກພວກເຮົາ ອັນເນື່ອງມາຈາກກິດຈະກຳຕ່າງໆຂອງບໍລິສັດພວກເຮົາ.
- ພວກເຮົາຕ້ອງປະຕິບັດຕາມກົດໝາຍ, ລະບຽບການ ແລະ ມາດຕະຖານພາຍໃນ ທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບ.
- ພວກເຮົາເຂົ້າຮ່ວມໃນການຝຶກອົບຮົມ ແລະ ບັນດາການສອນຕ່າງໆດ້ວຍຄວາມກະຕືລືລົ້ນເພື່ອຄວາມປອດໄພ ແລະ ສຸຂະພາບ.
- ພວກເຮົາຈະນຳໃຊ້ ແລະ ພັດທະນາລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບຂອງພວກເຮົາ.










## 2 ພວກເຮົາຈະປະຕິບັດຕາມທຸກກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງ; ລວມທັງ ກົດໝາຍວ່າດ້ວຍການຕໍ່ຕ້ານການສໍ້ລາດບັງຫຼວງ,ກົດໝາຍວ່າດ້ວຍການຕໍ່ຕ້ານການຜູກຂາດ ແລະ ການແຂ່ງຂັນທາງທຸລະກິດ, ແລະ ກົດໝາຍ ແລະ ລະບຽບການຕ່າງໆດ້ານການຄ້າ.

Regulations
Law
Compliance with Laws & Regulations

**ການປະຕິບັດຕາມກົດໝາຍ ແມ່ນ ສິ່ງທີ່ຕ້ອງເຮັດ ໃນທຸກກິດຈະກຳຂອງບໍລິສັດພວກເຮົາ. ບໍ່ໃຫ້ມີການກະທຳທີ່ຝ່າຝືນພຽງຄັ້ງດຽວເທົ່ານັ້ນກໍຫ້າມເດັດຂາດ ແລະ ເຊິ່ງເຮັດໃຫ້ເສຍຊື່ສຽງ ແລະ ທຳລາຍຄຸນຄ່າຂອງບໍລິສັດ.**

ເພາະສະນັ້ນ,

- ພວກເຮົາຕ້ອງຮຽນຮູ້ດີກັບກົດໝາຍ ແລະ ລະບຽບການທັງໝົດ (ລວມທັງ ລະບຽບການສາກົນ) ທີ່ຄອບຄຸມໃນຂອບເຂດຄວາມຮັບຜິດຊອບຂອງພວກເຮົາ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທັງໝົດຢ່າງເຂັ້ມງວດທຸກເວລາ.
- ພວກເຮົາຕ້ອງຊອກຫາຄຳແນະນຳຈາກພະແນກກົດໝາຍຂອງພວກເຮົາ ຫຼື ທີ່ປຶກສາດ້ານກົດໝາຍທີ່ມີຄຸນນະວຸດ ເມື່ອພວກເຮົາບໍ່ແນ່ໃຈ.
- ພວກເຮົາຕ້ອງລາຍງານທຸກການຝ່າຝືນ ໂດຍຜ່ານຊ່ອງທາງທີ່ເໝາະສົມທີ່ໄດ້ຖືກຈັດໃຫ້.

**ການຝ່າຝືນພຽງຄັ້ງດຽວຕໍ່ກົດໝາຍວ່າດ້ວຍການຕໍ່ຕ້ານການສໍ້ລາດບັງຫຼວງ,ກົດໝາຍວ່າດ້ວຍການຕໍ່ຕ້ານການຜູກຂາດ ແລະ ການແຂ່ງຂັນທາງທຸລະກິດ ຫຼື ກົດໝາຍ ແລະ ລະບຽບການຕ່າງໆດ້ານການຄ້າ ບໍ່ພຽງແຕ່ຮັບລົງໂທດທາງອາຍາເທົ່ານັ້ນ ຍັງອາດ ຈະນຳໄປສູ່ການຮັບລົງໂທດຢ່າງຮ້າຍແຮງ ແລະມັນສ້າງ ຄວາມເສຍຫາຍຕໍ່ການເສຍຊື່ສຽງທັງບຸກຄົນ ແລະ ຂອງບໍລິສັດພ້ອມທີ່ບໍ່ສາມາດກູ້ຄືນມາໄດ້ອີກ.**

ເພາະສະນັ້ນ,

- ພວກເຮົາຕ້ອງສຶກສາດ້ວຍຕົວເອງຢ່າງເຕັມສ່ວນກ່ຽວກັບທຸກກົດໝາຍທີ່ໃຊ້ໄດ້ທັງໝົດ ເຊັ່ນ: ກົດໝາຍວ່າດ້ວຍການຕໍ່ຕ້ານການສໍ້ລາດບັງຫຼວງ,ກົດໝາຍວ່າດ້ວຍການຕ້ານການຜູກຂາດ ແລະ ການແຂ່ງຂັນທາງທຸລະກິດ, ແລະ ກົດໝາຍ ແລະ ລະບຽບການຕ່າງໆດ້ານການຄ້າ, ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການດັ່ງກ່າວຢ່າງເຂັ້ມງວດທຸກເວລາ.
- ພວກເຮົາຂໍ, ໃຫ້ ຫຼື ຮັບເອົາຂອງຂວັນ, ອາຫານ, ການບັນເທີງ, ການບໍລິຈາກ ຫຼື ສິ່ງຂອງອື່ນໆບໍ່ໄດ້ເດັດຂາດ ທີ່ມີຈຸດປະສົງບໍ່ຖືກຕ້ອງຕາມກົດໝາຍ ຫຼື ຫຼັກຈັນຍາບັນ.
- ພວກເຮົາຕ້ອງແຂ່ງຂັນຢ່າງເປັນທຳໃນຕະຫຼາດ ແລະ ຫຼີກລ່ຽງທຸກກິດຈະກຳທີ່ອາດຈະນຳໄປສູ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານການຜູກຂາດ/ການແຂ່ງຂັນທາງທຸລະກິດ.
- ພວກເຮົາຕ້ອງໃຊ້ຄວາມລະມັດລະວັງເພີ່ມເຕີມ ເມື່ອພວກເຮົາພົບກັບຄູ່ແຂ່ງ ແລະ ໂດຍສະເພາະແມ່ນ ຕ້ອງຫຼີກລ່ຽງການສົນທະນາເຖິງຂໍ້ມູນທີ່ລະອຽດອ່ອນ ລວມທັງ ສ່ວນແບ່ງໃນຕະຫລາດ, ການຕະຫຼາດ, ລາຄາ ແລະ ຍຸດທະສາດການກຳນົດລາຄາ.
- ພວກເຮົາຕ້ອງຮັບຮູ້ວ່າສິ່ງຂອງບາງລາຍການ ຫຼື ຈຸດໝາຍປາຍທາງບາງແຫ່ງ ຫຼື ຄູ່ສັນຍາບາງຄົນ ອາດຖືກຂອ້ຳບາດທາງການຄ້າ ຫຼື ຖືກຫ້າມ ແລະ ພວກເຮົາຕ້ອງເອົາໃຈໃສ່ເປັນພິເສດເພື່ອຮັບປະກັນວ່າການເຮັດທຸລະກຳສາກົນທັງໝົດແມ່ນດຳເນີນໄປຕາມກົດໝາຍ ແລະ ລະບຽບການຕ່າງໆ.



## 3 ພວກເຮົາປະຕິບັດການລາຍງານທາງດ້ານການເງິນຖືກຕ້ອງ.

Accurate Financial Reporting

**ໃນຖານະເປັນສະມາຊິກຂອງບໍລິສັດທີ່ຈົດທະບຽນເປັນຕະຫຼາດຫຼັກຊັບ, ຄວາມຖືກ ຕ້ອງຂອງຂໍ້ມູນດ້ານການເງິນຂອງພວກເຮົາແມ່ນສິ່ງສຳຄັນ ສຳລັບທັງພວກເຮົາເອງ ແລະ ຜູ້ມີສ່ວນຮ່ວມກັບພວກເຮົາອີກດ້ວຍ.**

ເພາະສະນັ້ນ,

- ພວກເຮົາຕ້ອງເອົາໃຈໃສ່ເປັນພິເສດເພື່ອຢືນຢັນຄວາມຖືກຕ້ອງຂອງຕົວເລກຕ່າງໆທີ່ພວກເຮົາສະໜອງໃຫ້ ຫຼື ຍື່ນໃຫ້.
- ພວກເຮົາຕ້ອງປະຕິບັດຕາມຫຼັກການດ້ານການບັນຊີຕ່າງໆທີ່ກ່ຽວຂ້ອງ.
- ພວກເຮົາຕ້ອງເປີດເຜີຍຂໍ້ມູນທາງດ້ານການເງິນຂອງພວກເຮົາຢ່າງທັນການ, ຖືກຕ້ອງ ແລະ ບໍ່ຫຼອກລວງ.
- ພວກເຮົາຕ້ອງບັນທຶກຂໍ້ມູນການເຮັດທຸລະກຳທັງໝົດທີ່ເຊື່ອຖືໄດ້, ຖືກຕ້ອງ ແລະ ສາມາດກວດສອບໄດ້.






## 4 ພວກເຮົາມີຄວາມຮັບຜິດຊອບຕໍ່ການປະຕິບັດຕາມກົດລະບຽບທຸກຂໍ້ຂອງບໍລິສັດ.

RULES
Accountable to Company Rules

- ພວກເຮົາຕ້ອງເຂົ້າໃຈ ແລະ ປະຕິບັດຕາມ ກົດລະບຽບທຸກຂໍ້ຂອງບໍລິສັດ.
- ພວກເຮົາຕ້ອງຮັບຜິດຊອບຕໍ່ການລະເມີດກົດລະບຽບຂອງບໍລິສັດ ແລະ ເຂົ້າໃຈວ່າ ການລະເມີດດັ່ງກ່າວອາດນຳໄປສູ່ການປະຕິບັດທາງວິໄນ.

## 5 ພວກເຮົາຈະປະຕິບັດດ້ວຍຄວາມຊື່ສັດ,ສຸດຈະລິດ ແລະ ດ້ວຍຄວາມໂປ່ງໃສ, ແລະ ປົກປ້ອງ ແລະ ສ້າງຄວາມໄວ້ວາງໃຈໃນບັນດາຜູ້ມີສ່ວນຮ່ວມທັງໝົດ.

**ໃນຖານະເປັນພົນລະເມືອງທີ່ດີຂອງບໍລິສັດ, ພວກເຮົາປະຕິບັດດ້ວຍຄວາມຊື່ສັດ,ສຸດຈະລິດ ແລະ ຄວາມ ໂປ່ງໃສໃຫ້ເໜືອກວ່າບັນດາກົດໝາຍ ແລະ ລະບຽບການ ແລະ ດ້ວຍການປະຕິບັດດັ່ງກ່າວນີ້ ພວກເຮົາເຊື່ອໄດ້ວ່າຈະສ້າງຄວາມໄວ້ວາງໃຈຈາກຜູ້ມີສ່ວນຮ່ວມທັງໝົດ ແລະ ມັນຈະເປັນພື້ນຖານຂອງກິດຈະກຳຕ່າງໆຂອງພວກເຮົາ.**

ເພາະສະນັ້ນ,

- ພວກເຮົາຈະບໍ່ພຽງແຕ່ຫວັງຜົນກຳໄລຂອງຕົນເທົ່ານັ້ນ. ພວກເຮົາຍັງພິຈາລະນາເຖິງຜົນປະໂຫຍດຂອງຜູ້ມີສ່ວນຮ່ວມທີ່ຫຼາກຫຼາຍ ແລະ ພະຍາຍາມສ້າງຄວາມໄວ້ວາງໃຈຈາກພວກເຂົາ.
- ພວກເຮົາຈະດຳເນີນບັນດາກິດຈະກຳຂອງບໍລິສັດຕ່າງໆທີ່ສາມາດຮັບການກວດສອບດ້ານຈັນຍາບັນໃນທ້ອງຖິ່ນ ແລະ ສາກົນໄດ້ເທົ່ານັ້ນ.
- ພວກເຮົາຕ້ອງເຄົາລົບນັບຖື ແລະ ປົກປ້ອງ ຂໍ້ມູນສ່ວນຕົວ, ຊັບສິນທາງປັນຍາທີ່ເປັນຄວາມລັບ ແລະ ຄວາມລັບດ້ານການຄ້າຂອງພວກເຮົາເອງ ແລະ ຂອງຜູ້ອື່ນ.
- ພວກເຮົາຈະບໍ່ຕິດຕໍ່ພົວພັນກັບບຸກຄົນໃດທີ່ເຂົ້າຮ່ວມ ຫຼື ມີຄວາມກ່ຽວຂ້ອງກັບອາຊະຍາກຳທີ່ຈັດຕັ້ງຂຶ້ນໃດໆ ຫຼື ກິດຈະກຳໃດໆທີ່ຜິດກົດໝາຍ.
- ພວກເຮົາບໍ່ສ້າງຂໍ້ຄວາມແບບຫຼອກລວງ ຫຼື ເຮັດໃຫ້ເຂົ້າໃຈຜິດເດັດຂາດ ແລະ ຈະບໍ່ເຮັດພຶດຕິກຳແບບເສື່ອມເສຍ ແລະ ມີການອອກຄຳຄິດເຫັນທີ່ບໍ່ເໝາະສົມຕໍ່ຜູ້ອື່ນເດັດຂາດ. ຖ້າມີຂໍ້ຜິດພາດ,ພວກເຮົາຈະແກ້ໄຂໂດຍທັນທີ.
- ພວກເຮົາຕ້ອງເປີດເຜີຍທຸກຂໍ້ຂັດແຍ້ງດ້ານຜົນປະໂຫຍດກ່ຽວກັບຄວາມຮັບຜິດຊອບຂອງພວກເຮົາຕໍ່ບໍລິສັດ ແລະ ບໍ່ໃຫ້ຄວາມສຳຄັນຂອງຜົນປະໂຫຍດສ່ວນຕົວສູງກ່ວາຜົນປະໂຫຍດຂອງບໍລິສັດ.
- ພວກເຮົາຈະບໍ່ນຳໃຊ້ຊັບສິນຂອງບໍລິສັດ ເພື່ອຈຸດປະສົງອື່ນນອກເໜືອຈາກເພື່ອຈຸດປະສົງຂອງບໍລິສັດ.
- ພວກເຮົາຈະບໍ່ເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນການຊື້ຂາຍຫຼັກຊັບໂດຍໃຊ້ຂໍ້ມູນພາຍໃນຢ່າງເດັດຂາດ.



## 6 ພວກເຮົາຈະປະກອບສ່ວນໃນການພັດທະນາສັງຄົມແບບຍືນຍົງ.

**ພວກເຮົາເຊື່ອຢ່າງເລິກເຊິ່ງວ່າ ກະແຈສຳຄັນຕໍ່ຄວາມສຳເລັດແບບຍືນຍົງຂອງພວກເຮົາ ແມ່ນການປະສົມປະສານກັນ ແລະ ການພັດທະນາຮ່ວມກັນກັບປະຊາຊົນ, ສັງຄົມ ແລະ ໂລກ.**

ເພາະສະນັ້ນ,

- ພວກເຮົາຈະພະຍາຍາມເຮັດໃຫ້ຕົນເອງຮຽນຮູ້ຄວາມຕ້ອງການຂອງທ້ອງຖິ່ນ ແລະ ຂອງທົ່ວໂລກ ແລະ ປະກອບສ່ວນໃນການກໍ່ສ້າງພື້ນຖານແບບຍືນຍົງໃຫ້ແກ່ການພັດທະນາອຸດສາຫະກຳ ແລະ ເສດຖະກິດ ດ້ວຍການເຮັດວຽກຮ່ວມກັນກັບ ທຸລະກິດທ້ອງຖິ່ນ,ຊຸມຊົນ ແລະ ອຳນາດການປົກຄອງພາກ ລັດໃນທົ່ວໂລກ.
- ພວກເຮົາຈະສົ່ງເສີມ ກິດຈະກຳການປະກອບສ່ວນຂອງສັງຄົມໃນທົ່ວໂລກຢ່າງຈິງຈັງ, ໂດຍສະເພາະແມ່ນ ດ້ານການສຶກສາ,ສະຫວັດດີການສັງຄົມ ແລະສິ່ງແວດລ້ອມ.

## 7 ພວກເຮົາຈະສົ່ງເສີມ ແລະ ດຳເນີນກິດຈະກຳຕ່າງໆຂອງບໍລິສັດແບບເປັນມິດກັບສິ່ງແວດລ້ອມ.

**ການປະສົມປະສານກິດຈະກຳຕ່າງໆຂອງບໍລິສັດພວກເຮົາກັບສິ່ງແວດລ້ອມໄດ້ຖືກຢັ່ງຮາກລົງເລິກໃນປັດຊະຍາພື້ນຖານຂອງພວກເຮົາ.**

ເພາະສະນັ້ນ,

- ພວກເຮົາຕ້ອງປະຕິບັດຢ່າງເຂັ້ມງວດຕາມກົດໝາຍ ແລະ ມາດຕະຖານ ກ່ຽວກັບສິ່ງແວດລ້ອມທັງໃນທ້ອງຖິ່ນແລະ ທົ່ວໂລກ.
- ພວກເຮົາຈະພັດທະນາເຕັກໂນໂລຢີ, ການບໍລິການ, ຜະລິດຕະພັນ ແລະ ຮູບແບບທຸລະກິດທີ່ເປັນມິດກັບສິ່ງແວດລ້ອມ.
- ພວກເຮົາຈະຫຼຸດຜ່ອນຂີ້ເຫຍື້ອ, ໝູນໃຊ້ຜະລິດຕະພັນຕ່າງໆ ແລະ ນຳໃຊ້ຊັບ ພະຍາກອນຕ່າງໆຄືນໃໝ່ ໂດຍອີງຕາມດຳເນີນກິດຈະກຳຕ່າງໆຂອງບໍລິສັດ.
- ພວກເຮົາຈະພິຈາລະນາຢ່າງມີຄວາມຖືກຕ້ອງເຖິງຜົນກະທົບຕໍ່ສິ່ງແວດລ້ອມໃນການດຳເນີນກິດຈະກຳຕ່າງໆຂອງບໍລິສັດພວກເຮົາ.
- ພວກເຮົາຈະຕິດຕາມກວດກາ ແລະ ປະເມີນຜົນຢ່າງລະມັດລະວັງ ກ່ຽວກັບຜົນກະທົບຕໍ່ສະພາບແວດລ້ອມ ຈາກກິດຈະກຳຕ່າງໆຂອງບໍລິສັດໂດຍ ຜ່ານລະບົບການຄຸ້ມຄອງສິ່ງແວດລ້ອມຂອງພວກເຮົາ.

## 8 ພວກເຮົາຈະເພີ່ມມູນຄ່າໂດຍຜ່ານນະວັດຕະກຳແລະ “Kaizen” (ການປັບປຸງຢ່າງຕໍ່ເນື່ອງ).

Innovation & Kaizen

**ເພື່ອເຕີບໂຕໃນເສັ້ນທາງແບບຍືນຍົງ ແລະ ປະກອບສ່ວນສັງຄົມທີ່ມີການປ່ຽນແປງ, ພວກເຮົາຈຳເປັນຕ້ອງມຸ່ງໝັ້ນ ເພື່ອສ້າງແນວຄວາມຄິດໃໝ່ ແລະ ມູນຄ່າໃໝ່ ເພື່ອສັງຄົມ ແລະ ສືບຕໍ່ປັບປຸງກິດຈະກຳຕ່າງໆຂອງບໍລິສັດພວກເຮົາ.**

ເພາະສະນັ້ນ,

- ພວກເຮົາຈະເຊື່ອມຕໍ່ກັນ ແລະ ແບ່ງປັນແນວຄວາມຄິດ,ເຕັກໂນໂລຢີ ແລະ ຄວາມຊ່ຽວຊານທີ່ແຕກຕ່າງກັນ ໂດຍຜ່ານເຄືອຂ່າຍ ແລະ ຕ່ອງໂສ້ມູນຄ່າຂອງພວກເຮົາ ໃນທົ່ວໂລກ.
- ພວກເຮົາຈະສືບຕໍ່ປັບປຸງຮູບແບບທຸລະກິດ ແລະ ຂະບວນການຂອງພວກເຮົາ ໂດຍຜ່ານກິດຈະກຳ PDCA ແລະ Kaizen.
- ພວກເຮົາຈະຂະຫຍາຍນະວັດຕະກຳຂອງພວກເຮົາ ແລະ Kaizen ດ້ວຍຄວາມກະຕືລືລົ້ນ ໃຫ້ທົ່ວເຖິງຕ່ອງໂສ້ມູນຄ່າແລະ ໃນຂົງເຂດທຸລະກິດໃໝ່ຂອງພວກເຮົາ.

## 9 ພວກເຮົາຈະເຄົາລົບຕໍ່ສິດທິມະນຸດ.

Respect Human Rights

**ການເຄົາລົບຕໍ່ປະຊາຊົນ ແມ່ນໄດ້ຖືກຢັ່ງຮາກລົງເລິກໃນປັດຊະຍາພື້ນຖານຂອງພວກເຮົາ. ພວກເຮົາຍອມຮັບການລະເມີດສິດທິມະນຸດບໍ່ໄດ້ເດັດຂາດ.**

ໂດຍສະເພາະແມ່ນ:

- ພວກເຮົາເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນທຸລະກິດໃດທີ່ຂັດກັບກຽດສັກສີຂອງມະນຸດບໍ່ໄດ້ ຢ່າງເດັດຂາດ.
- ພວກເຮົາຈຳແນກຄົນໂດຍອີງຕາມເຊື້ອຊາດ, ສີຜິວ, ເພດ, ສາສະໜາ ຫຼື ຊາດກຳເນີດເດີມ ບໍ່ໄດ້ຢ່າງເດັດຂາດ.
- ພວກເຮົາບໍ່ໃຫ້ມີສ່ວນຮ່ວມໃນການໃຊ້ແຮງງານເດັກ,ການຄ້າມະນຸດ ຫຼື ຮູບການໃຊ້ແຮງງານ ອື່ນໆແບບບັງຄັບ ຫຼື ແບບບໍ່ສະໝັກໃຈຢ່າງເດັດຂາດ.
- ພວກເຮົາບໍ່ຍອມຮັບການລ່ວງລະເມີດທຸກຮູບແບບຢ່າງເດັດຂາດ.
- ພວກເຮົາພົວພັນກັບຜູ້ທີ່ເຂົ້າຮ່ວມ ຫຼື ມີສ່ວນກ່ຽວຂ້ອງກັບການ ລະເມີດສິດທິມະນຸດບໍ່ໄດ້ ຢ່າງເດັດຂາດ.



## 10 ພວກເຮົາຈະຮັບເອົາຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງໝົດທຸກຄົນ ຢູ່ພາຍໃນບໍລິສັດ ແລະ ສັງຄົມຂອງພວກເຮົາ.

Diversity & Inclusion

**ພວກເຮົາເຊື່ອວ່າຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງໝົດທຸກຄົນ ແມ່ນແຫຼ່ງທີ່ມາຂອງ ນະວັດຕະກຳ ແລະ ການເຕີບໂຕ. ຄວາມຫຼາກຫຼາຍຂອງພວກເຮົາຊ່ວຍໃຫ້ພວກເຮົາສາມາດ ຍົກລະດັບມຸມມອງທາງຄວາມຄິດທີ່ແຕກຕ່າງກັນ ເພື່ອຕອບສະໜອງຕໍ່ການປ່ຽນແປງຂອງສະພາບ ແວດລ້ອມທາງທຸລະກິດ ແລະ ຄວາມຕ້ອງການຂອງລູກຄ້າໃນທົ່ວໂລກທີ່ນັບມື້ນັບເພີ່ມຂຶ້ນ.**

ເພາະສະນັ້ນ,

- ພວກເຮົາຈະສົ່ງເສີມໃຫ້ມີສະຖານທີ່ເຮັດວຽກທີ່ມີຄວາມຫຼາກຫຼາຍເຊິ່ງເປັນບ່ອນທີ່ມີຄົນທີ່ ມາຈາກເຊື້ອຊາດ, ຊາດກຳເນີດເດີມ,ເພດ ແລະ ອາຍຸທີ່ແຕກຕ່າງກັນມາເຮັດວຽກຮ່ວມກັນ.
- ພວກເຮົາຈະສົ່ງເສີມການມີໂອກາດທີ່ເທົ່າທຽມກັນໃຫ້ແກ່ສະມາຊິກທຸກຄົນໂດຍບໍ່ຈຳແນກເຊື້ອຊາດ, ຊາດກຳເນີດເດີມ ຫຼື ເພດຂອງພວກເຂົາ.
- ພວກເຮົາຈະສົ່ງເສີມການສື່ສານແບບເປີດກວ້າງ ແລະ ໃນທົ່ວທຸກລະດັບຂອງສະມາຊິກ ແລະ ອົງກອນຂອງພວກເຮົາ.
- ພວກເຮົາຈະເສີມຂະຫຍາຍຄວາມຊ່ຽວຊານ ພາຍຫຼັງລວມເປັນບໍລິສັດດຽວກັນຂອງພວກເຮົາ ເພື່ອໃຫ້ໄດ້ປຽບໃນການແຂ່ງຂັນ.











## ນັ້ນແມ່ນໂອເຄບໍ?

# ແຜນອາດການຢືນຢັນ COCE






# ແຜນອາດການຢືນຢັນ COCE



**ນີ້ສອດຄ່ອງກັບ COCE ຫຼືບໍ?**

**ເລີ່ມ**

**ຂັ້ນຕອນ 1** ສາມາດປະຕິບັດມາດຕະການຄວາມປອດໄພທາງອານາໄມຢ່າງຖືກຕ້ອງແລະເໝາະສົມໄດ້ບໍ່?
- ແມ່ນແລ້ວ → ຂັ້ນຕອນ 2
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 2** ຖືກກົດໝາຍຫຼືບໍ່?
- ແມ່ນແລ້ວ → ຂັ້ນຕອນ 3
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 3** ອັນນີ້ສອດຄ່ອງກັບກົດລະບຽບຂອງບໍລິສັດບໍ່?
- ແມ່ນແລ້ວ → ຂັ້ນຕອນ 4
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 4** ຖ້າສະມາຊິກຄອບຄົວຂອງທ່ານຮັບຮູ້,ທ່ານສາມາດພູມໃຈເລື່ອງນີ້ບໍ່?
- ແມ່ນແລ້ວ → ຂັ້ນຕອນ 5
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 5** ອັນນີ້ປະກອບສ່ວນໃນການພັດທະນາສັງຄົມບໍ່?
- ແມ່ນແລ້ວ → ຂັ້ນຕອນ 6
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 6** ອັນນີ້ມິດກັບສິ່ງແວດລ້ອມແບບຍືນຍົງບໍ່?
- ແມ່ນແລ້ວ → ຂັ້ນຕອນ 7
- ບໍ່ແມ່ນ → ຢຸດ

**ຂັ້ນຕອນ 7** ອັນນີ້ເຄົາລົບນັບຖື ສິດທິມະນຸດບໍ່?
- ແມ່ນແລ້ວ → ເປົ້າໝາຍ

**ຢຸດ**
ເຊິ່ງຂັດກັບ COCE. ກະລຸນາພິຈາລະນາຄືນໃໝ່. ✕

**ເປົ້າໝາຍ**
ການສອດຄ່ອງໄດ້ຖືກຢືນຢັນ.

# ລາຍງານການລະເມີດ COCE ທັນທີ!

**ເພື່ອສ້າງວັດທະນະທຳທີ່ດີກ່ວາເກົ່າຂຶ້ນອີງຕາມ COCE, ສິ່ງສຳຄັນແມ່ນການລາຍງານທັນທີເມື່ອພົບເຫັນການລະເມີດ COCE ທີ່ອາດເກີດຂຶ້ນ.**



- ພະນັກງານແລະຜູ້ບໍລິຫານທຸກຄົນຕ້ອງລາຍງານຄວາມກັງວົນກ່ຽວກັບການລະເມີດ COCE ຕ່າງໆໂດຍທັນທີຜ່ານຊ່ອງທາງທີ່ເໝາະສົມ*.
- ພະນັກງານແລະຜູ້ບໍລິຫານທຸກຄົນຕ້ອງຮ່ວມມືຢ່າງເຕັມທີ່ກັບການສືບສວນຂອງບໍລິສັດກ່ຽວກັບເລື່ອງການລະເມີດ COCE.
- ກຸ່ມ TTC ຫ້າມຢ່າງເຂັ້ມງວດການກະທຳແກ້ແຄ້ນ ຫຼືການປະຕິບັດທີ່ບໍ່ຍຸດຕິທຳຕໍ່ຜູ້ທີ່ລາຍງານການລະເມີດ COCE ຫຼືຮ່ວມມືກັບການສືບສວນດ້ວຍຄວາມຈິງໃຈ.

| ຊ່ອງທາງທີ່ເໝາະສົມ: | ①ສາຍລາຍງານພາຍໃນອົງການ (ຜູ້ຄຸ້ມຄອງ ແລະອື່ນໆ.)<br>②ພະແນກຂອງບໍລິສັດທີ່ເໝາະສົມ |
|---|---|

**ຖ້າທ່ານມີຄວາມຫຍຸ້ງຍາກໃນການລາຍງານຜ່ານຊ່ອງທາງທີ່ເໝາະສົມ, ກະລຸນາລາຍງານໄປທີ່ສາຍດ່ວນພາຍໃນຂອງບໍລິສັດ.**



## \ SPEAK UP /

ກຸ່ມ Toyota Tsusho ໄດ້ຈັດຕັ້ງສາຍດ່ວນພາຍໃນລະດັບໂລກສຳລັບການແຈ້ງເຕືອນທີ່ເອີ້ນວ່າ “SPEAK UP”.
ກະລຸນາໃຊ້ສາຍດ່ວນນີ້ ຖ້າທ່ານມີຄວາມຫຍຸ້ງຍາກໃນການລາຍງານຜ່ານຊ່ອງທາງທີ່ເໝາະສົມ ຫຼື ຜ່ານສາຍດ່ວນພາຍໃນ ຂອງບໍລິສັດ.




**ລາຍລະອຽດເພີ່ມເຕີມ,ກະລຸນາອ້າງອີງລະບົບ “Toyota Tsusho Group Whistleblowing System” ໃນ G-TWINS.**
https://ttc-g-twins.toyotsu.co.jp/compliance_kikikanri/page_000008.html